ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ນະຄອນຫຼວງວຽງຈັນ, ວັນທີ: ..30/04/2021..........

**ມະຕິ**

**ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2020.**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2020 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:15 ໂມງ ຫາ 15:30 ໂມງ ຂອງວັນທີ 30 ເມສາ 2021 ທີ່ຫ້ອງປະຊຸມ ຊັ້ນ 3 ໂຮງແຮມເມືອງແທ່ງ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄໍາສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈໍານວນ 16 ທ່ານ, ຜູ້ມອບສິດຈໍານວນ 161 ທ່ານ ຊຶ່ງລວມຈໍານວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 160.346.080 ຮຸ້ນ, ນັບທັງ 6.556.313 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 80,348% ຂອງຈໍານວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດໍາເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສໍາລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈໍານວນ 40.820.907 ຮຸ້ນ ເທົ່າກັບ 19,652% ຂອງຈໍານວນຮຸ້ນ ທຄຕລ ທັງໝົດ.

**ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:**

**ວາລະທີ 1: ຮັບຊາບການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ຖືຮຸ້ນປະຈໍາປີ 2019:**

**ວາລະທີ 2: ຮັບຮອງບົດບັນທຶກຂອງກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2019.**

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈໍານວນ: 0 ສຽງ, ເທົ່າກັບ 0% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 3: ຮັບຮອງເອົາການດໍາເນີນງານຂອງ ທຄຕລ ໃນປີ 2020.**

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈໍານວນ: 0 ສຽງ, ເທົ່າກັບ 0% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 4: ຮັບຮອງເອົາຜົນການດໍາເນີນທຸລະກິດຂອງ ທຄຕລ ປະຈໍາປີ 2020:**

ຜົນການດໍາເນີນທຸລະກິດປະຈໍາປີ 2020 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PWC ແລະ ຮັບຮອງຈາກສະພາບໍລິຫານ ທຄຕລ ມີດັ່ງນີ້:

- ຍອດຊັບສິນ/ໜີ້ສິນ: 53.897.380 ລ້ານກີບ;
- ຍອດສິນເຊື່ອທັງໝົດ: 29.216.946 ລ້ານກີບ;
- ຍອດເງິນຝາກທັງໝົດ: 47.974.516 ລ້ານກີບ;



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

- ກຳໄລກ່ອນອາກອນ: 279.417 ລ້ານກີບ;
- ກຳໄລຫຼັງອາກອນ: 223.036 ລ້ານກີບ;

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 5: ຮັບຮອງເງິນປັນຜົນປະຈຳປີ 2020:**

ຈາກຕົວເລກກຳໄລປະຈຳປີ 2020 ຂອງ ທຄຕລ, ຫຼັງຈາກຫັກອາກອນກຳໄລໃນທຸລະກິດ, ສ້າງຄັງຕ່າງໆຕາມລະບຽບການແລ້ວກອງປະຊຸມ ຮັບຮອງການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນໃນຈຳນວນທັງໝົດ 116.325,05 ລ້ານກີບ, ເທົ່າກັບ 560 ກີບ/ຮຸ້ນ; ການຈ່າຍເງິນປັນຜົນຈະໄດ້ປະຕິບັດໃຫ້ສຳເລັດພາຍໃນວັນທີ 18 ພຶດສະພາ 2021.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 6: ຮັບຮອງເອົາແຜນການປີ 2021:**

ກອງປະຊຸມ ໄດ້ຮັບຮອງເອົາແຜນການປະຈຳປີ 2021 ດັ່ງນີ້:

- ຍອດຊັບສິນ: 56.893.300 ລ້ານກີບ, ທຽບໃສ່ການປະຕິບັດປີ 2020 ເພີ່ມຂຶ້ນ 5,56%;
- ຍອດເງິນຝາກ: 50.300.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2020 ເພີ່ມຂຶ້ນ 4,85%;
- ຍອດເງິນກູ້ທັງໝົດ: 29.743.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2020 ເພີ່ມຂຶ້ນ 1,80%;
- ກຳໄລກ່ອນອາກອນ: 314.000 ລ້ານກີບ, ທຽບໃສ່ປະຕິບັດ 2020 ເພີ່ມຂຶ້ນ 12,38%.
- ແຜນຮັບພະນັກງານໃໝ່ ປະກອບໃຫ້ ທຄຕລ ທົ່ວລະບົບ ຈຳນວນ 87 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການອີກ 8 ໜ່ວຍບໍລິການ ໃນທົ່ວປະເທດ ແລະ ຍົກລະດັບໜ່ວຍບໍລິການປະຈຳແຂວງໄຊສົມບູນ ໃຫ້ເປັນສາຂາໃນທ້າຍປີ 2021.
- ແຜນການນຳໃຊ້ທຶນເພື່ອປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງທັງໝົດ: 335,73 ຕື້ກີບ ແລະ ແຜນຄາດວ່າຈະໂອນເປັນຊັບສົມບັດຄົງທີ່ ເປັນຈຳນວນເງິນທັງໝົດ: 253,18 ຕື້ກີບ.

ໃນກໍລະນີທີ່ມີການປ່ຽນແປງໃດໆໃນອະນາຄົດ ກອງປະຊຸມຜູ້ຖືຮຸ້ນເຫັນດີມອບສິດໃຫ້ສະພາບໍລິຫານ ພິຈາລະນາປັບປຸງແຜນການປະຈຳປີ 2021 ຕາມຄວາມເໝາະສົມ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 7: ຮັບຮອງເອົາຜູ້ກວດສອບອິດສະຫຼະ ປະຈຳປີ 2021:**

ກອງປະຊຸມ ໄດ້ຮັບຮອງເອົາການແຕ່ງຕັ້ງບໍລິສັດ PWC ເປັນຜູ້ກວດສອບອິດສະຫຼະຂອງ ທຄຕລ ປະຈຳປີ 2021, ລາຄາກວດສອບ ແລະ ທົບທວນຂອບເຂດເງິນກູ້ ແມ່ນ 100.000 ໂດລາສະຫະລັດ. ການບໍລິການກວດສອບລວມມີການກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວພາສາອັງກິດ, ທົບທວນຖານະການເງິນປະຈຳ 6 ເດືອນ ແລະ ປະຈຳປີ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 8: ການແຕ່ງຕັ້ງສະພາບໍລິຫານຂອງ ທຄຕລ;**

ເນື່ອງຈາກການສະເໜີລາຍຊື່ບຸກຄະລາກອນຂອງສະພາບໍລິຫານ ທຄຕລ ຊຸດໃໝ່ ຍັງຢູ່ໃນລະຫວ່າງການຂໍຮັບຮອງຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ, ກອງປະຊຸມເຫັນດີໃຫ້ສະພາບໍລິຫານຊຸດປະຈຸບັນສືບຕໍ່ປະຕິບັດໜ້າທີ່ໄປຈົນກວ່າ ສະພາບໍລິຫານຊຸດໃໝ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 9: ຮັບຮອງເອົາແຜນຍຸດທະສາດຂອງ ທຄຕລ ໄລຍະປີ 2021-2025:**

ແຜນຍຸດທະສາດຂອງ ທຄຕລ ກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດ ພາຍໃຕ້ວິໄສທັດ "ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ". ໃນນັ້ນ, ໄດ້ກຳນົດ 3 ຍຸດທະສາດໃຫຍ່ ຄື:

- ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນຢ່າງຮອບດ້ານ
- ຍຸດທະສາດທີ 2: ຍຸດທະສາດຫັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ
- ຍຸດທະສາດທີ 3: ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 166.877.493 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 10: ຮັບຮອງການປັບປຸງກົດລະບຽບ ທຄຕລ**

ການປັບປຸງກົດລະບຽບ ທຄຕລ ເພື່ອໃຫ້ສອດຄ່ອງກັບບັນດາກົດໝາຍ ແລະ ນິຕິກຳຂອງຜູ້ຄຸ້ມຄອງທີ່ໄດ້ມີການປັບປຸງ ໂດຍໄດ້ອີງໃສ່ນິຕິກຳທີ່ກ່ຽວຂ້ອງເຊັ່ນ: ກົດໝາຍວ່າດ້ວຍທະນາຄານທຸລະກິດ, ກົດໝາຍວ່າດ້ວຍຫລັກຊັບ, ກົດໝາຍວ່າດ້ວຍວິສາຫະກິດ, ຂໍ້ຕົກລົງຂອງ ສຄຄຊ ວ່າດ້ວຍສະພາບໍລິຫານ, ການຫຼັກການຄຸ້ມຄອງບໍລິຫານ (CG Guideline), ຫຼັກການບາເຊວ 2 ແລະ ນິຕິກຳທີ່ກ່ຽວຂ້ອງກັບບໍລິສັດຈົດທະບຽນ;

ກອງປະຊຸມ ໄດ້ຮັບຮອງດ້ວຍມະຕິສະເພາະດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີຈຳນວນ 177 ທ່ານ ເທົ່າກັບ 100% ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ, ເຊິ່ງມີຮຸ້ນທັງໝົດ 166.877.493 ຮຸ້ນ, ເທົ່າກັບ 100% ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 80,348% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.
- ບໍ່ເຫັນດີຈຳນວນ: 0 ທ່ານ, ເທົ່າກັບ 0% ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນ ສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

**ປະທານກອງປະຊຸມ**

**ຄຳສຸກ ສູນດາລາ**